ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈຳລາວ
ສະສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: .................
ຂະໜາດພິມ: 21x29,7 cm, ຈຳນວນ:...........ຫົວ
ພິມທີ່ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

ບົດເຝິກຫັດ ໜ່ວຍຄອບຄົວຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 1 2012

## ບົດເຝິກຫັດ

# ໜ່ວຍຄອບຄົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 1

## ເຫຼັ້ມທີ 2



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ກິດຈະກຳການຮຽນ-ການສອນ

# ໜ່ວຍ: ຄອບຄົວຂອງຂ້ອຍ

### ສຳລັບຊັ້ນອະນຸບານປີທີ 1



**ເນື້ອໃນການຮຽນຂອງໜ່ວຍຄອບຄົວຂອງຂ້ອຍປະກອບມີ:**

1. ສະມາຊິກໃນຄອບຄົວ.
2. ເຮືອນ ແລະ ເຄື່ອງໃຊ້ໃນເຮືອນ.
3. ການປະຕິບັດຕົນໃນຄອບຄົວ.
4. ຊ່ວຍເຫຼືອກັນໃນຄອບຄົວ.

# ສະມາຊິກໃນຄອບຄົວ











**ເນື້ອໃນການຮຽນຂອງຫົວຂໍ້ສະມາຊິກໃນຄອບຄົວປະກອບມີ:**

1. ສະມາຊິກໃນຄອບຄົວ.
2. ໜ້າທີ່ຮັບຜິດຊອບໃນຄອບຄົວ.
3. ອາຊີບຂອງບຸກຄົນໃນຄອບຄົວ.
4. ຊ່ວຍເຫຼືອກັນໃນຄອບຄົວ.
5. ຄວາມອົບອຸ່ນໃນຄອບຄົວ.

# ສະມາຊິກໃນຄອບຄົວ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກສະມາຊິກໃນຄອບຄົວ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ມີໃຜແດ່? ໃນຄອບຄົວຂອງຫຼານເດມີໃຜແດ່?
- ສະຫຼຸບ: ສະມາຊິກໃນຄອບຄົວມີ ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ຂ້ອຍ.
- ທາສີຮູບຄົນນັ່ງກິນເຂົ້າ ໂດຍນໍາໃຊ້ສີຕາມໃຈ.

# ໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຮັບຜິດຊອບຂອງບຸກຄົນໃນຄອບຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ເຮັດຫຍັງ? ໃນຄອບຄົວຂອງຫຼານເດ ແຕ່ລະຄົນມີໜ້າທີ່ຫຍັງ?
- ສະຫຼຸບ: ພໍ່ເປັນຜູ້ເບິ່ງແຍງຄອບຄົວ, ແມ່ແຕ່ງກິນ, ອ້າຍ, ເອື້ອຍ ແລະ ນ້ອຍ ຊ່ວຍວຽກພໍ່ແມ່.
- ທາສີຮູບຄົນແຕ່ງກິນໂດຍນຳໃຊ້ສີຕາມໃຈ.

# ອາຊີບຂອງບຸກຄົນໃນຄອບຄົວ







**ຈຸດປະສົງ:** ເພື່ອໃຫ້ເດັກບອກອາຊີບຂອງບຸກຄົນໃນຄອບຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ແມ່ນໃຜ? ໃນຄອບຄົວຂອງຫຼານເດ ພໍ່, ແມ່, ລູກ, ອ້າຍ, ເອື້ອຍ, ນ້ອງ ເຮັດຫຍັງ?
- ສະຫຼຸບ: ພໍ່ເປັນທະຫານ, ແມ່ເປັນຄູ, ອ້າຍ, ເອື້ອຍ, ນ້ອງ ເປັນນັກຮຽນ.
- ທາສີຮູບຄົນແຕ່ລະອາຊີບໂດຍນຳໃຊ້ສີຕາມໃຈ.

# ຊ່ວຍເຫຼືອກັນໃນຄອບຄົວ









**ຈຸດປະສົງ:** ເພື່ອໃຫ້ເດັກບອກການຊ່ວຍເຫຼືອກັນໃນຄອບຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ເຂົາເຮັດຫຍັງ? ໃນຄອບຄົວຂອງຫຼານເດ ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ໄດ້ຊ່ວຍກັນແນວໃດ?
- ສະຫຼຸບ: ການຊ່ວຍເຫຼືອກັນໃນຄອບຄົວແມ່ນຕ້ອງເບິ່ງແຍງກັນໃນ ເວລາບໍ່ສະບາຍ ແລະ ຊ່ວຍເຮັດວຽກເຮືອນ.
- ທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ຄວາມອົບອຸ່ນໃນຄອບຄົວ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຄວາມອົບອຸ່ນໃນຄອບຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນໃຜໃນຮູບນີ້? ພໍ່ເຖົ້າ ແລະ ແມ່ເຖົ້າກຳລັງເຮັດຫຍັງ? ຫຼານດີໃຈບໍ ເມື່ອໄດ້ຟັງພໍ່ເຖົ້າເລົ່ານິທານ?
- ກັບສະຫຼຸບ: ພໍ່ເຖົ້າ, ແມ່ເຖົ້າເລົ່ານິທານພາໃຫ້ຄອບຄົວອົບອຸ່ນ.
- ທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ຄວາມອົບອຸ່ນໃນຄອບຄົວ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຄວາມອົບອຸ່ນໃນຄອບຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ພໍ່ ແລະ ແມ່ກຳລັງເຮັດຫຍັງ? ພໍ່, ແມ່ເຄີຍກອດ ແລະ ອຸ້ມຫຼານບໍ? ຫຼານມີຄວາມຮູ້ສຶກແນວໃດ ເມື່ອພໍ່ແມ່ກອດ?
- ສະຫຼຸບ: ການກອດ, ການອູ້ມ ແລະ ການໃຫ້ກຳລັງໃຈກໍພາໃຫ້ຄອບຄົວອົບອຸ່ນ.
- ທາສີຮູບພໍ່, ແມ່ ແລະ ລູກໂດຍນຳໃຊ້ສີຕາມໃຈ.

# ຄວາມອົບອຸ່ນໃນຄອບຄົວ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຄວາມອົບອຸ່ນໃນຄອບຄົວ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ກໍາລັງເຮັດຫຍັງ? ຫຼານ ເຄີຍຫຼິ້ນກັບອ້າຍ, ເອື້ອຍ, ນ້ອງບໍ?
- ສະຫຼຸບ: ອ້າຍ, ເອື້ອຍ, ນ້ອງຫຼິ້ນຮ່ວມກັນກໍພາໃຫ້ຄອບຄົວອົບອຸ່ນ.
- ທາສີຮູບເດັກນ້ອຍໂດຍນໍາໃຊ້ສີຕາມໃຈ.

# ເຮືອນ ແລະ ເຄື່ອງໃຊ້ໃນເຮືອນ



**ເນື້ອໃນການຮຽນຂອງຫົວຂໍ້ ເຮືອນ ແລະ ເຄື່ອງໃຊ້ໃນເຮືອນປະກອບມີ:**

1. ຫ້ອງຕ່າງໆໃນເຮືອນ.
2. ເຄື່ອງໃຊ້ໃນຫ້ອງນອນ ແລະ ການບົວລະບັດຮັກສາ.
3. ເຄື່ອງໃຊ້ໃນຫ້ອງຮັບແຂກ ແລະ ການບົວລະບັດຮັກສາ.
4. ເຄື່ອງໃຊ້ໃນຫ້ອງນໍ້າ ແລະ ການບົວລະບັດຮັກສາ.
5. ເຄື່ອງໃຊ້ໃນຫ້ອງຄົວ ແລະ ການບົວລະບັດຮັກສາ.

# ຫ້ອງຕ່າງໆໃນເຮືອນ









**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ຫ້ອງຕ່າງໆໃນເຮືອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຖາມດັ່ງນີ້: ຮູບນີ້ມີຫ້ອງຫຍັງແດ່? ເຮືອນຂອງພວກຫຼານເດມີຫ້ອງຫຍັງແດ່?
- ສະຫຼຸບ: ຫ້ອງຕ່າງໆໃນເຮືອນມີຫ້ອງນອນ, ຫ້ອງຮັບແຂກ, ຫ້ອງນ້ຳ ແລະ ຫ້ອງຄົວ.
- ທາສີຮູບຄືນ ແລະ ເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງໃຊ້ໃນຫ້ອງນອນ



**ຈຸດປະສົງ:** ໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງນອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ແມ່ນຫ້ອງຫຍັງ? ມີເຄື່ອງໃຊ້ຫຍັງແດ່? ຫ້ອງນອນຢູ່ເຮືອນຂອງຫຼານມີເຄື່ອງໃຊ້ຫຍັງແດ່?
- ສະຫຼຸບ: ເຄື່ອງໃຊ້ໃນຫ້ອງນອນມີ ຕຽງ, ຕູ້, ໝອນ, ຜ້າຫົ່ມ, ຜ້າປູບ່ອນ ແລະ ມຸ້ງ.
- ທາສີຮູບບ່ອນນອນ ແລະ ເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາຫ້ອງນອນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການບົວລະບັດຮັກສາຫ້ອງນອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຄວນບົວລະບັດຮັກສາຫ້ອງນອນແນວໃດ?
- ສະຫຼຸບ: ການບົວລະບັດຮັກສາຫ້ອງນອນຕ້ອງປັດຂີ້ຝຸ່ນ ແລະ ຊັກເຄື່ອງນອນ.
- ທາສີຮູບຄືນ ແລະ ບ່ອນນອນໂດຍນຳໃຊ້ສີຕາມໃຈ.

# ເຄື່ອງໃຊ້ໃນຫ້ອງຮັບແຂກ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງຮັບແຂກ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ ແມ່ນຫ້ອງຫຍັງ ? ມີເຄື່ອງໃຊ້ຫຍັງແດ່? ຫ້ອງຮັບແຂກຢູ່ເຮືອນຫຼານມີເຄື່ອງໃຊ້ຫຍັງແດ່?
- ສະຫຼຸບ: ເຄື່ອງໃຊ້ໃນຫ້ອງຮັບແຂກມີ ໂຊຟາ, ໂຕະ, ຕັ່ງ, ຕູ້ໂຊ, ເຕົ້າດອກໄມ້ ແລະ ໂທລະພາບ.
- ທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາຫ້ອງຮັບແຂກ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການບົວລະບັດຮັກສາຫ້ອງຮັບແຂກ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນກຳລັງເຮັດຫຍັງໃນຮູບນີ້? ຄວນບົວລະບັດຮັກສາຫ້ອງຮັບແຂກແນວໃດ?
- ສະຫຼຸບ: ການບົວລະບັດຮັກສາ ຫ້ອງຮັບແຂກ ຕ້ອງເຊັດຖູ ແລະ ປັດຂີ້ຝຸ່ນ.
- ທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ເຄື່ອງໃຊ້ໃນຫ້ອງນ້ຳ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງນ້ຳ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ ແມ່ນຫ້ອງຫຍັງ? ມີເຄື່ອງໃຊ້ຫຍັງແດ່? ຫ້ອງນ້ຳຢູ່ເຮືອນຫຼານມີເຄື່ອງໃຊ້ຫຍັງແດ່?
- ສະຫຼຸບ: ເຄື່ອງໃຊ້ໃນຫ້ອງນ້ຳມີໂອ, ໄຫນ້ຳ, ຟອຍຖູຫ້ອງນ້ຳ, ນ້ຳຢາລ້າງ ຫ້ອງນ້ຳ, ສະບູ, ແຟັບ ແລະ ຜ້າເຊັດມື.
- ທາສີຮູບເຄື່ອງໃຊ້ໃນຫ້ອງນ້ຳໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາຫ້ອງນ້ຳ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການບົວລະບັດຮັກສາຫ້ອງນ້ຳ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຄວນບົວລະບັດຮັກສາຫ້ອງນ້ຳແນວໃດ?
- ສະຫຼຸບ: ການບົວລະບັດຮັກສາຫ້ອງນ້ຳ ຕ້ອງເຊັດຖູ ແລະ ປັດຂີ້ຝຸ່ນ.
- ທາສີຮູບເດັກນ້ອຍອະນາໄມຫ້ອງນ້ຳໂດຍນຳໃຊ້ສີຕາມໃຈ.

# ເຄື່ອງໃຊ້ໃນຫ້ອງຄົວ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງໃຊ້ໃນຫ້ອງຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ ແມ່ນຫ້ອງຫຍັງ? ມີເຄື່ອງໃຊ້ຫຍັງແດ່? ຫ້ອງຄົວຢູ່ເຮືອນຫຼານມີເຄື່ອງໃຊ້ຫຍັງແດ່?
- ສະຫຼຸບ: ເຄື່ອງໃຊ້ໃນຫ້ອງຄົວມີຖ້ວຍ, ບ່ວງ, ສ້ອມ, ໝໍ້ ແລະ ເຕົາໄຟ.
- ທາສີຮູບເຄື່ອງໃຊ້ໃນຫ້ອງຄົວໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາ ເຄື່ອງໃຊ້ໃນຫ້ອງຄົວ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນກຳລັງເຮັດຫຍັງໃນຮູບນີ້? ເຄື່ອງໃຊ້ໃນຫ້ອງຄົວຄວນມ້ຽນໄວ້ໃສ? ຄວນບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງຄົວແນວໃດ?
- ສະຫຼຸບ: ການບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງຄົວ ຕ້ອງມ້ຽນໃຫ້ຖືກບ່ອນ, ລ້າງ ແລະ ເຊັດໃຫ້ສະອາດ.
- ທາສີຮູບຄົນໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຄອບຄົວ (ການປະພຶດ)









**ເນື້ອໃນການຮຽນຂອງຫົວຂໍ້ ການປະຕິບັດຕົນໃນຄອບຄົວປະກອບມີ:**

1. ປະຕິບັດລະບຽບໃນຄອບຄົວ.
2. ນັບຖືຜູ້ໃຫຍ່.
3. ໜ້າທີ່ຂອງຕົນເອງ.
4. ມ້ຽນເຄື່ອງຫຼິ້ນ, ເຄື່ອງໃຊ້.
5. ຮັກສາເຄື່ອງໃຊ້, ເຄື່ອງຫຼິ້ນ.

# ການປະຕິບັດລະບຽບໃນຄອບຄົວ









**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດລະບຽບໃນຄອບຄົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ຢູ່ເຮືອນຂອງຫຼານກໍປະຕິບັດແນວນີ້ບໍ?
- ສະຫຼຸບ: ຕ້ອງປະຕິບັດລະບຽບໃນຄອບຄົວເຊັ່ນ: ການກິນ, ນອນ, ຫຼິ້ນ ແລະ ການໄປມາລາຄອບ.
- ທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ນັບຖືຜູ້ໃຫຍ່



**ຈຸດປະສົງ:** ເພື່ອໃຫ້ເດັກບອກການເຄົາລົບນັບຖືຜູ້ໃຫຍ່.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ຢູ່ເຮືອນ ຂອງຫຼານກໍປະຕິບັດແນວນີ້ບໍ?
- ສະຫຼຸບ: ການເຄົາລົບນັບຖືແມ່ນຟັງຄວາມພໍ່ແມ່ ແລະ ສະມາຊິກໃນຄອບຄົວ, ຖາມສະບາຍດີ, ຂອບໃຈ, ຄອບລາດ້ວຍການນົບ ແລະ ກົ້ມຫົວເວລາຍ່າງກາຍຜູ້ໃຫຍ່.
- ທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ໜ້າທີ່ຂອງຕົນເອງ





**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງຕົນເອງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ຢູ່ເຮືອນຂອງຫຼານກໍປະຕິບັດແນວນີ້ບໍ?
- ສະຫຼຸບ: ໜ້າທີ່ຂອງຕົນເອງໃນຄອບຄົວແມ່ນ ຊ່ວຍເກືອສັດລ້ຽງ, ປັດກວາດ ແລະ ເຊັດຖູເຄື່ອງໃນເຮືອນ.
- ທາສີຮູບຄົນ ແລະ ສັດໂດຍນຳໃຊ້ສີຕາມໃຈ.

# ການມ້ຽນເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການມ້ຽນເຄື່ອງຫຼິ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ຢູ່ເຮືອນຂອງຫຼານກໍປະຕິບັດແນວນີ້ບໍ?
- ສະຫຼຸບ: ຕ້ອງເກັບເຄື່ອງຫຼິ້ນໃນເວລາຫຼິ້ນແລ້ວເຊັ່ນ: ລົດຖີບນ້ອຍ, ຕຸກກະຕາ... ຕ້ອງມ້ຽນໃຫ້ຖືກບ່ອນ ແລະ ເປັນລະບຽບ.
- ທາສີຮູບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການມ້ຽນເຄື່ອງໃຊ້



**ຈຸດປະສົງ:** ເພື່ອໃຫ້ເດັກບອກການມ້ຽນເຄື່ອງໃຊ້.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຖ້າໃຊ້ເຄື່ອງໃຊ້ແລ້ວຄວນເຮັດແນວໃດ?
- ສະຫຼຸບ: ເຄື່ອງໃຊ້ໃນເວລາໃຊ້ແລ້ວເຊັ່ນ: ໝອນ, ຜ້າຫົ່ມ, ເຄື່ອງຂຽນ ຕ້ອງມ້ຽນໃຫ້ຖືກບ່ອນ ແລະ ເປັນລະບຽບ.
- ທາສີຮູບເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ຮັກສາເຄື່ອງໃຊ້ໃນຄອບຄົວ













**ຈຸດປະສົງ:** ເພື່ອໃຫ້ນັກຮຽນ ບອກການຮັກສາເຄື່ອງໃຊ້ໃນຄອບຄົວ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຮັກສາເຄື່ອງໃຊ້ຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາເຄື່ອງໃຊ້ໃນຄອບຄົວແມ່ນບໍ່ຖິ້ມ ແລະ ບໍ່ມ້າງເພເຄື່ອງໃຊ້.
- ທາສີຮູບເຄື່ອງໃຊ້ໂດຍນໍາໃຊ້ສີຕາມໃຈ.

# ຮັກສາ ເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາເຄື່ອງຫຼິ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ຮັກສາເຄື່ອງຫຼິ້ນຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາເຄື່ອງຫຼິ້ນແມ່ນ ບໍ່ຖິ້ມ ແລະ ບໍ່ມ້າງເພເຄື່ອງຫຼິ້ນ.
- ທາສີຮູບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນຄອບຄົວ







**ເນື້ອໃນການຮຽນຂອງຫົວຂໍ້ ການປະຕິບັດຕົນໃນຄອບຄົວປະກອບມີ:**

1. ມາລະຍາດໃນການ ເວົ້າ, ຟັງ ແລະ ເບິ່ງ.
2. ມາລະຍາດໃນການກິນ ແລະ ດື່ມ.
3. ມາລະຍາດໃນການ ນັ່ງ ແລະ ຍ່າງ.
4. ມາລະຍາດໃນການນົບ, ໄຫວ້.
5. ມາລະຍາດໃນການໄປ, ມາ.

# ມາລະຍາດໃນການເວົ້າ ແລະ ຟັງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການເວົ້າ ແລະ ຟັງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາກຳລັງເຮັດຫຍັງ? ຫຼານຄວນເວົ້າກັບຜູ້ໃຫຍ່ແນວໃດ?
- ສະຫຼຸບ: ການຟັງ ແລະ ການເວົ້າກັບພໍ່ແມ່ອ້າຍ, ເອື້ອຍ, ນ້ອງ ແລະ ເພື່ອນບ້ານຕ້ອງເວົ້າດ້ວຍຄຳສຸພາບ ເຊັ່ນ: ໂດຍ, ຂ້ານ້ອຍ, ຂ້ອຍ, ເຈົ້າ, ຂໍໂທດ, ຂອບໃຈ, ບໍ່ເວົ້າຕັດຄວາມຜູ້ໃຫຍ່ ແລະ ຕັ້ງໃຈຟັງ.
- ທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການເບິ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການເບິ່ງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຫຼານຄວນເບິ່ງໂທລະພາບເວລາໃດ?
- ສະຫຼຸບ: ເບິ່ງໂທລະພາບຕ້ອງເບິ່ງເປັນເວລາ.
- ທາສີຮູບເດັກນ້ອຍ ແລະ ເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການກິນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການກິນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ເຂົາເຈົ້າເຮັດຫຍັງ? ຫຼານກິນອາຫານຄວນກິນແນວໃດ?
- ສະຫຼຸບ: ການກິນອາຫານຕ້ອງຫຍໍ້າອາຫານຊ້າ, ບໍ່ໃຫ້ອາຫານເຮ່ຍຈາກປາກ, ຫຍໍ້າອາຫານໃຫ້ແຫຼກ ແລະ ບໍ່ມີສຽງດັງ.
- ທາສີຮູບຄົນກຳລັງກິນເຂົ້າໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການດື່ມ





**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການດື່ມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ຫຼານຄວນດື່ມນ້ຳແນວໃດ?
- ສະຫຼຸບ: ມາລະຍາດໃນການດື່ມແມ່ນດື່ມດ້ວຍຄວາມລະມັດລະວັງ ແລະ ບໍ່ໃຫ້ນ້ຳເຮ່ຍອອກຈາກປາກ.
- ທາສີຮູບຄົນດື່ມນ້ຳໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການນັ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການນັ່ງ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຄົນໃນຮູບນີ້ ເຂົາເຈົ້ານັ່ງແນວໃດ? ຢູ່ເຮືອນຂອງຫຼານກໍປະຕິບັດແນວນີ້ບໍ?
- ສະຫຼຸບ: ມາລະຍາດໃນການນັ່ງຕ້ອງນັ່ງພັບແພບ.
- ທາສີຮູບຄົນໂດຍນໍາໃຊ້ສີຕາມໃຈ.

# ມາລະຍາດໃນການຍ່າງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການຍ່າງ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ຫຼານຄວນຍ່າງແນວໃດເມື່ອກາຍຜູ້ໃຫຍ່?
- ສະຫຼຸບ: ມາລະຍາດໃນການຍ່າງບໍ່ໃຊ້ສຽງດັງເກີນໄປ ແລະ ເມື່ອກາຍຜູ້ໃຫຍ່ຕ້ອງ ກົ້ມຫົວ.
- ທາສີຮູບຄືນໂດຍນໍາໃຊ້ສີຕາມໃຈ.

# ມາລະຍາດໃນການ ນົບໄຫວ້





**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການນົບໄຫວ້.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ເຂົາເຈົ້າເຮັດຫຍັງ? ຢູ່ເຮືອນຂອງຫຼານກໍປະຕິບັດແນວນີ້ບໍ?
- ສະຫຼຸບ: ການນົບພໍ່, ແມ່, ຄູອາຈານ ແລະ ຜູ້ໃຫຍ່ຕ້ອງຍໍມືພຽງເອິກ, ກົ້ມຫົວລົງ ແລະ ການໄຫວ້ພະຕ້ອງຍໍມືພຽງຫົວ.
- ທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການໄປ, ມາ



**ຈຸດປະສົງ:** ເພື່ອໃຫ້ເດັກບອກມາລະຍາດໃນການໄປ, ມາ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ເຂົາເຈົ້າເຮັດຫຍັງ? ເວລາຫຼານຈະໄປຫຼິ້ນຕ້ອງບອກໃຜ?
- ສະຫຼຸບ: ການໄປ, ການມາ ຕ້ອງຂໍອະນຸຍາດ ແລະ ບອກໃຫ້ຜູ້ໃຫຍ່ຮູ້ສະຖານທີ່ ທີ່ຕ້ອງການໄປ.
- ທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.